**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ 1472-ກປ

ນະຄອນຫຼວງວຽງຈັນ, ວັນທີ 19 APR 2022

# ແຈ້ງການ

**ເຖິງ:** - ບັນດາກົມ, ຫ້ອງການ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ບັນດາ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ;
- ບັນດາ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ.

**ເລື່ອງ:** ໃຫ້ສືບຕໍ່ຮີບຮ້ອນດຳເນີນການມອບ-ຮັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຢູ່ຂັ້ນທ້ອງຖິ່ນ.

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ບົດບັນທຶກ ມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 11 ພະຈິກ 2021;
- ອີງຕາມ ບົດບັນທຶກການພົບປະ ລະຫວ່າງ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແລະ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເພື່ອປຶກສາຫາລືວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 5 ເມສາ 2022.

ເພື່ອສືບຕໍ່ຈັດຕັ້ງປະຕິບັດ ບົດບັນທຶກ ມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 11 ພະຈິກ 2021 ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ສາມາດຈັດຕັ້ງປະຕິບັດໜ້າທີ່, ຂອບເຂດສິດຂອງຕົນຢ່າງຖືກຕ້ອງ, ຈະແຈ້ງ, ມີປະສິດທິພາບ ແລະ ປະສິດທິຜົນ. ສະນັ້ນ, ກະຊວງກະສິກຳ ແລະ ປ່າໄມ້ ຈຶ່ງແຈ້ງການມາຍັງບັນດາທ່ານ ດັ່ງນີ້:

1. ໃຫ້ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຮີບຮ້ອນປະສານສົມທົບກັບ ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການ ມອບ-ຮັບ ວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ລະຫວ່າງ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລະ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ ຕາມເນື້ອໃນບົດບັນທຶກມອບ-ຮັບ ລະຫວ່າງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້ ຄັ້ງວັນທີ 11 ພະຈິກ 2021 ແລະ ບົດບັນທຶກການພົບປະລະຫວ່າງ 2 ກະຊວງ ຄັ້ງວັນທີ 5 ເມສາ 2022. ການມອບ-ຮັບ ດັ່ງກ່າວ ໃຫ້ສຳເລັດກ່ອນວັນທີ 10 ພຶດສະພາ 2022.
2. ບັນດາໜ້າວຽກທີ່ຂະແໜງກະສິກຳ ແລະ ປ່າໄມ້ ຮັບຜິດຊອບກ່ຽວກັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ມີດັ່ງນີ້:
   - ເປັນຜູ້ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານອຸດສາຫະກຳປຸງແຕ່ງກະສິກຳ ແລະ ປ່າໄມ້ ເຊັ່ນ: ການອອກອະນຸຍາດສ້າງຕັ້ງໂຮງງານ ລວມມີ: ບົດວິພາກເສດຖະກິດ-ເຕັກນິກ ແລະ ອອກໃບຢັ້ງຢືນດຳເນີນກິດຈະການໂຮງງານ, ມາດຕະຖານໂຮງງານ, ປະຕິບັດມາດຕະຖານຫຼັກການຜະລິດ

ທີ່ດີ (GMP), ການຄຸ້ມຄອງຂອງຜະລິດຕະພັນ; ການໃຈະ, ຖອນ, ຍົກເລີກ ໃບຢັ້ງຢືນດຳເນີນກິດຈະການໃນ 11 ລາຍການຂອງດຳລັດ 603/ນຍ;

- ການຈັດຕັ້ງກຳລັງການຜະລິດ, ພັດທະນາການຜະລິດ, ຄຸ້ມຄອງການຜະລິດ ຕາມທິດທັນເປັນທັນສະໄໝ;
- ຊຸກຍູ້ສົ່ງເສີມການຜະລິດເປັນວັດຖຸດິບ, ຄຸນນະພາບຂອງຜົນຜະລິດ, ການຄຸ້ມຄອງວັດຖຸດິບສົ່ງເຂົ້າ, ການຄຸ້ມຄອງຜະລິດຕະພັນສົ່ງອອກ;
- ເປັນຜູ້ເຈລະຈາ ທາງດ້ານສຸຂານາໄມພືດ ແລະ ສັດ (SPS) ເພື່ອເປີດຕະຫຼາດ, ຄວບຄຸມດ້ານເຕັກນິກໃຫ້ໄປຕາມມາດຕະຖານປະເທດຄູ່ຄ້າ, ມາດຕະຖານຂອງແຕ່ລະປະເທດ ແລະ ເງື່ອນໄຂຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ເຊັ່ນ: ມາດຕະຖານການປູກ, ຢັ້ງຢືນເຂດການຜະລິດ, ແນວພັນ, ຖິ່ນກຳເນີດ, ມາດຕະຖານການຜະລິດ, ຢັ້ງຢືນພະຍາດຕ່າງໆ, ແມງໄມ້-ສັດຕູພືດ, ສານເຄມີຕົກຄ້າງ, ເຕັກນິກການຜະລິດ, ການປະສົມປຸ໋ຍຕ່າງໆ ແລະ ອື່ນໆ;
- ປະສານສົມທົບກັບຂະແໜງອຸດສະຫະກຳ ແລະ ການຄ້າ ໃນການຈັດຕັ້ງປະຕິບັດວຽກງານປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້ ເພື່ອໃຫ້ວຽກງານສາມາດດຳເນີນໄປຢ່າງເປັນລະບົບ, ຖືກຕ້ອງ ແລະ ສອດຄ່ອງກັບພາລະບົດບາດຂອງສອງກະຊວງ.

3. ບັນດາໜ້າວຽກທີ່ຂະແໜງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບກ່ຽວກັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ມີດັ່ງນີ້:
   - ເປັນຜູ້ຄຸ້ມຄອງມະຫາພາກ ເຊັ່ນ: ການຂຶ້ນທະບຽນວິສາຫະກິດ, ຕິດຕາມ ກວດກາ ມາດຕະຖານເຕັກນິກໂຮງງານ ຄວາມປອດໄພ, ສຸຂານາໄມແຮງງານ ແລະ ສິ່ງແວດລ້ອມໂຮງງານ, ສົ່ງເສີມການປະຕິບັດຫຼັກການຜະລິດທີ່ດີ (GMP), ມາດຕະຖານສິນຄ້າທີ່ຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ;
   - ເປັນຜູ້ເຈລະຈາກ່ຽວກັບໂກຕ້າສົ່ງອອກຜະລິດຕະພັນກະສິກຳ (ພືດ-ສັດ) ແລະ ຜະລິດຕະພັນປຸງແຕ່ງ;
   - ປະສານສົມທົບກັບກະຊວງກະສິກຳ ແລະ ປ່າໄມ້ ໃນການຈັດຕັ້ງປະຕິບັດວຽກງານປຸງແຕ່ງກະສິກຳ ແລະ ປຸງແຕ່ງໄມ້ ເພື່ອໃຫ້ວຽກງານສາມາດດຳເນີນໄປຢ່າງເປັນລະບົບ, ຖືກຕ້ອງ ແລະ ສອດຄ່ອງກັບພາລະບົດບາດຂອງສອງກະຊວງ;
   - ແລກປ່ຽນນິຕິກຳ ແລະ ຂໍ້ມູນສະຖິຕິຕ່າງໆ ກ່ຽວກັບວຽກງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຮ່ວມກັບກະຊວງກະສິກຳ ແລະ ປ່າໄມ້.
4. ໃຫ້ສືບຕໍ່ຮີບຮ້ອນຜັນຂະຫຍາຍຈັດຕັ້ງປະຕິບັດຄຳສັ່ງວ່າດ້ວຍການຄຸ້ມຄອງ, ຊຸກຍູ້ສົ່ງເສີມ ແລະ ພັດທະນາໂຮງງານປຸງແຕ່ງກະສິກຳຂັ້ນຕົ້ນ, ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ສະບັບເລກທີ 0346/ກປ, ລົງວັນທີ 24 ກຸມພາ 2022 ເປັນຕົ້ນແມ່ນການສ້າງ ແລະ ປັບປຸງບັນດານິຕິກຳ, ການເກັບຂໍ້ມູນ ແລະ ຂຶ້ນບັນຊີ, ສ້າງລະບົບຖານຂໍ້ມູນ ເພື່ອຄຸ້ມຄອງບັນດາໂຮງງານດັ່ງກ່າວ ໃຫ້ເປັນຮູບປະທຳໂດຍໄວ, ບໍ່ໃຫ້ແກ່ຍາວໄປຕື່ມອີກ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ. ໒.໙໓

ລັດຖະມົນຕີ

ບ່ອນນຳສົ່ງ:

1. ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ 1 ສະບັບ (ເພື່ອຮັບຊາບ);
2. ຫ້ອງວ່າການປົກຄອງແຂວງ, ນວ ບ່ອນລະ 1 ສະບັບ (ເພື່ອຊ່ວຍຊີ້ນຳ);
3. ເກັບອັກສາໄວ້ 1 ສະບັບ.

ປອ. ເພັດ ພົມພິພັກ